**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 03-ມີກກະຣາ 2010 (01-03-2010)**

---

# ການຄຸ້ນຄິດກັບຄວາມໝາຍຂອງຊີວິດ

**ຂໍ້ພຣະຄັມພີໃນບົດຮຽນ**: (ປັຍຍາຈານ 1:1-11; 12:13-14)

## ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:

ບົດຮຽນນີ້ກ່ຽວກັບພວກຄົນທີ່ປະເຊີນກັບການຕັດສິນໃຈບໍ່ໄດ້ໃນການຫາຄວາມໝາຍສະເພາະເຈາະຈົງອັນແທ້ຈິງຂອງຊີວິດຂອງພວກເຂົາເຈົ້າ.

## ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:

ຄົນເຮົາມີຄວາມຕ້ອງການຢາກຫລີກລ່ຽງຈາກການເບິ່ງສິ່ງຕ່າງໆ ໃນແງ່ຮ້າຍ ແລະຈາກການເຢາະເຢີ້ຍກັບສິ່ງທີ່ລົ້ມລຸກຄຸກຄານ ຊຶ່ງໄດ້ຂຽນໄວ້ໃນພຣະທັມປັນຍາຈານ. ເມື່ອຄົນເຮົາຄົ້ນພົບວ່າຄວາມໝາຍຂອງຊີວິດວ່າມັນເລີ້ມຕົ້ນ ແລະຈົບລົງໂດຍພຣະເຈົ້າ, ພວກເຂົາເຈົ້າກໍພົບເປົ້າໝາຍໃນຊີວິດ.

## ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:

ບົດຮຽນນີ້ ຈະຊ່ອຍໃຫ້ທ່ານຄົ້ນພົບວ່າພຣະເຈົ້າເປັນແຫລ່ງທີ່ມາຂອງຊີວິດ.

## ການຈັດຕຽມ ແລະແຜນການສອນຂອງຄຣູ:

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລົ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

## ແນະນຳ:

- ອະທິບາຍ: ການຕໍ່ສູ້ຢ່າງມີຄວາມໝາຍໃນຊີວິດຂອງບາງຄົນບາງເທື່ອກໍເໝືອນກັບວ່າແຄນດີ້ດອກຝ້າຍທີ່ໝຸນປັ່ນ... ການກໍ່ສ້າງອາຄານ ແລະການຊອກຫາອຸປກອນກໍ່ສ້າງ ແລະໄດ້ມາແລ້ວກໍກໍ່ສ້າງຂຶ້ນມາ ແມ່ນຫຍັງທີ່ເຂົາເຈົ້າໄດ້ສ້າງຂຶ້ນມາແລ້ວກໍຫາຍສາບສູນໄປຢ່າງໄວວາແທ້ ເພາະວ່າສິ່ງເຫລົ່ານັ້ນເປັນພຽງຂອງຊົ່ວຄາວ.
- ໃນບົດຮຽນນີ້ຈະຊີ້ໃຫ້ເຫັນສາມຄຳຖາມຖາມ: ຊີວິດບໍ່ມີຄວາມໝາຍຫຍັງເລີຍບໍ່?
ຊີວິດເຮັດໃຫ້ທ່ານອ່ອນເພັຽບໍ່? ແມ່ນຫຍັງທີ່ເປັນຄຳຕອບ?
- ໃຫ້ນັກຮຽນເວົ້າເຖິງໃນເວລາທີ່ເຂົາເຈົ້າຮູ້ສຶກວ່າເຂົາເຈົ້າເອງຖືກຖາມດ້ວຍຄຳຖາມຢ່າງດຽວກັນນີ້.

1. **ຊີວິດນີ້ມີຄວາມໝາຍບໍ່?**: (ປັນຍາຈານ 1:1-7)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ປັນຍາຈານ 1:1-7
- ກະສັດຊາໂລໂມນອາຈຊີ້ແຈງເຣື່ອງອາຫານອັນຫລວງຫລາຍມະຫາສານທີ່ລາວໄດ້ພິຈາຣະນາເບິ່ງແລ້ວ ຫລືບິວເກດໃນສມັຍຂອງລາວ, ລາວມີອຳນາດ, ມີລາຍໄດ້ສູງ, ແລະມີຊັບສິນບັດອັນມະຫາສານ. ກະສັດຊາໂລໂມນມີທຸກສິ່ງທີ່ຄົນທັງຫລາຍຊອກຫາ "ໄຝ່ຝັນຫາໃນຊີວິດ".
- ມັນມີຄວາມຮູ້ສຶກແນວໃດ ແລະແມ່ນຫຍັງທີ່ທ່ານຄິດໃນເມື່ອຊີວິດຂອງທ່ານເປັນແຕ່ລົມຫາຍໃຈ (ຫລືເປັນເໝືອນແຄນດີ້ດອກຝ້າຍ) ຈາກທັສນະຂອງພຣະເຈົ້າ?
- ກະສັດຊາໂລໂມນຊີ້ໃຫ້ເຫັນການດຳເນີນຊີວິດທີ່ປາສຈາກພຣະເຈົ້າກໍບໍ່ມີຄວາມສຳຄັນຫຍັງເລີຍ.
- ສເນີໃຫ້ນັກຮຽນຍົກຕົວຢ່າງຂອງເຫດການທີ່ບໍ່ສຳຄັນ (ບໍ່ມີປໂຍດ)ຂອງຊີວິດທີ່ປາສຈາກພຣະເຈົ້າ.
- ຄົນພວກເຮົາສ່ວນຫລາຍກໍມີຄວາມຮູ້ສຶກຢູ່ໃນພາກສ່ວນການດຳຣົງຊີວິດທີ່ບໍ່ມີປໂຍດ. ມີຜູ້ເຖົ້າ ຜູ້ແກ່ຊະຣາ ຫລາຍຄົນມີຄວາມຄິງອມເຫງົາ ໃນເມື່ອເຖົ້າແລ້ວບໍ່ຮູ້ຈັກກັບພຣະເຈົ້າ, ໄດ້ຊີວິດໄປທຳນອງດຽວກັນ ແລະ ປາສຈາກຄວາມຫວັງ. ເປັນຫຍັງເຂົາເຈົ້າຈຶ່ງໃຊ້ເວລາຂອງເຂົາເຈົ້າໄປໃນທາງຂອງເຂົາເຈົ້າເອງທີ່ປາສຈາກ ຊີວິດນິຣັນ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** (ປັນຍາຈານ 1:1-7)

1. ທ່ານເຄີຍຮູ້ຈັກໃຜແດ່ທີ່ມີທຸກສິ່ງທຸກຢ່າງແລະກໍຈາກໄປໂດຍທຸກສິ່ງທີ່ເຂົາເຈົ້າມີນັ້ນບໍ່ມີຄວາມໝາຍຫຍັງ ສຳລັບເຂົາເຈົ້າເລີຍ?
2. ທ່ານຈະຊັ່ງຊາການເປັນຜູ້ບໍຣິຫານທີ່ດີຂອງສິ່ງຂອງທີ່ທ່ານມີຢູ່ໂດຍບໍ່ໃຫ້ຕົກເຮັ່ງເສັ່ງຫາຍໄປໄດ້ ຫລືໃຫ້ສິ່ງຂອງເຫລົ່ານັ້ນກາຍມາເປັນວັດຖຸນິຍົມໄດ້ແນວໃດ?
3. ແມ່ນຫຍັງແດ່ທີ່ພວກເຮົາສາມາດສະແດງອອກໃຫ້ໂລກເຊື່ອຖືໄດ້?
4. ເຮັດແນວໃດຈຶ່ງຈະໃຫ້ຊີວິດຂອງພວກເຮົາມີຄວາມໝາຍ?
5. ບັນດາຜູ້ທີ່ເຊື່ອຄວນຈະຈິດຈໍ່ຢູ່ທີ່ສິ່ງຂອງໃຫ້ມີຄວາມໝາຍໃນຊີວິດທີ່ຕົກຢູ່ໃນກັບດັກແຫ່ງຄວາມຄິດທີ່ບໍ່ມີ ຄວາມໝາຍຫຍັງນັ້ນບໍ່?

2. **ຊີວິດນີ້ຈ່ອງດຶງທ່ານບໍ່?**: (ປັນຍາຈານ 1:8-11)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ປັນຍາຈານ 1:8-11ແລ້ວຖາມນັກຮຽນວ່າໃນທາງໃດທີ່ເຂົາເຈົ້າສາມາດ ສ້າງສາຍສັມພັນກັບຜູ້ຂຽນພຣະທັມນີ້?
- ມີຈັກຢ່າງ ຫລືມີຈັກແນວຄິດທີ່ເຫັນຢູ່ໃນຜູ້ເຖົ້າໃນຊ່ວງເວລາຊີວິດທີ່ບໍ່ມີຫຍັງໃໝ່ແຕ່ວົນວຽນກັບໄປກັບມາຢູ່ ແຕ່ລະປີຄືເກົ່າ?
- ຄິດເບິ່ງເຣື່ອງຂອງປີໃໝ່ທີ່ມີໃນປີນີ້ ປີຕໍ່ໄປກໍຈະມີປີໃໝ່ກັບມາອີກ ຊຶ່ງຊີ້ໃຫ້ພວກເຮົາເຫັນວ່າສິ່ງທີ່ເປັນຂຶ້ນ ແລ້ວຈະເປັນຂຶ້ນອີກ, ສິ່ງທີ່ເຮັດແລ້ວກໍຈະຕ້ອງເຮັດກັນອີກ ແລະບໍ່ມີສິ່ງໃດໃໝ່ ເພາະສິ່ງທີ່ເຮົາວ່າໃໝ່ນັ້ນ ມັນມີຢູ່ແລ້ວຕັ້ງແຕ່ສມັຍກ່ອນພວກເຮົາທັງຫລາຍເກີດມາ.
- ກະສັດໂຊໂລໂມນຮຮູ້ຈັກວ່າອັນໃດເປັນອັນໃດ. ທ່ານຮູ້ວ່າແມ່ນຫຍັງຄືເປັນສິ່ງຈ່ອງດຶງຂອງການເຮັດຊ້ຳ
- ແລ້ວຊ້ຳອີກ ຫລືເປັນຈຸດອ່ອນທີ່ສະແດງໃຫ້ເຫັນການປັບປຸງແກ້ໄຂ ຫລືຄວາມກ້າວໜ້າໃນຊີວິດທີ່ປະເຊີນ ລາວໄດ້ເຖິງຈຸດສຸດຍອດ ແລະກໍບໍ່ໄດ້ສາບສູນຊຶ່ງເປັນບ່ອນສະຖານທີ່ສູງສຸດກວ່າທຸກບ່ອນທີ່ທ່ານໄດ້ໄປ

ຮັບ, ຊັບສິນບັດ, ຫລືຄວາມສັມພັນ. ສິ່ງທີ່ສຳຄັນທີ່ໄດ້ຮັບເທື່ອດຽວໃນຊີວິດ, ຊຶ່ງບໍ່ແມ່ນດຽວນີ້ ໃນຊີວິດນີ້ນັ້ນແມ່ນອັນໃດ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ປັນຍາຈານ 1:8-11

1. ແມ່ນຫຍັງທີ່ເປັນຄວາມຫວັງຂອງຊຸບເປີໂບລ ແລະທີມທີ່ຈະໄດ້ຮັບຫລັງຈາກໄດ້ຊັຍຊນະແຂ່ງຂັນ? ຈົ່ງພິຈາຣະນາເບິ່ງໃນເມື່ອໝົດຣະດູແຂ່ງຂັນແລ້ວທີມທີ່ເສັຽທັງຫລາຍຈະກັບມາຫລິ້ນອີກໃນຣະດູທີສອງບໍ່?
2. ບາງຄັ້ງຊີວິດກໍເໝືອນກັນການຊະນະ ຫລືການເສັຽນັ້ນຢ່າງໃດ? ແມ່ນຫຍັງທີ່ສະແດງອອກໃນການຊະນະ ຫລື ການເສັຽໃນຊີວິດຂອງທ່ານ?
3. ເໝືອນກັນກັບທີມທີ່ກັບມາເລີ້ມຕົ້ນໃໝ່ໃນຣະດູໃໝ່, ພວກຜູ້ເຖົ້າຈິດຈໍ່ຢູ່ທີ່ພຣະເຈົ້າ ແລະເລີ້ມຕົ້ນໃໝ່ໃນປີຕໍ່ໆໄປນັ້ນເປັນແນວໃດ?

3 . **ແມ່ນຫຍັງຄືຄຳຕອບ?:** (ປັນຍາຈານ 12:13-14)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 12:13-14
- ໃຫ້ນັກຮຽນສລຸບສັ້ນໆ ໃນພຣະທັມປັນຍາຈານ 12:13-14 ໃຫ້ເຂົ້າກັບຈຸດສຳຄັນນຶ່ງຈຸດ.
- ຊີ້ອອກໃຫ້ເຫັນວ່າແຄນດີ້ດອກຝ້າຍນັ້ນບໍ່ເໝືອນກັນກັບ ພຣະບັນຍັດ ແລະຄຳສັນຍາຂອງພຣະເຈົ້າ ຢ່າເຮັດໃຫ້ເສັຽຫາຍໄປ ແຕ່ເຮັດໃຫ້ພື້ນຖານແຂງແຮງຂຶ້ນ ເພື່ອທຸກຄົນຈະໄດ້ພົບ ແລະມີປະສົບການຄວາມໝາຍໃນຊີວິດ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:** ປັນຍາຈານ 12:13-14

1. ການຢ້ານຢຳພຣະເຈົ້າມີຄວາມໝາຍແນວໃດ?
2. ທ່ານເຫັນສັງຄົມຂອງພວກເຮົາຢ້ານກົວພຣະເຈົ້າ ຫລືຢູ່ໃນການຢ້ານຢຳພຣະອົງ?
3. ຖ້າຜູ້ໃດຜູ້ນຶ່ງຫາກຂາດຄວາມສັມພັນກັບພຣະເຈົ້າ ແລະພ້ອມທັງຢ້ານກົວພຣະອົງແລ້ວຈະເປັນແນວໃດ?
4. ມີໃຜແດ່ທີ່ທ່ານຮູ້ຈັກວ່າເຂົາເຈົ້າຕົກຢູ່ໃນການຕໍ່ສູ້ກັບຊີວິດທີ່ມີຄວາມໝາຍ? ທ່ານຈະແບ່ງປັນເຣື່ອງຂອງພຣະຄຣິດສູ່ຄົນນັ້ນຟັງແນວໃດໃນອາທິດນີ້?

**ພຣະຄັມພີແຫ່ງຄວາມຈິງ**

- ການຊອກຫາວິທີທາງໃຫ້ສຸຂພາບດີທີ່ມີຄວາມໝາຍແຫ່ງຊີວິດນັ້ນ ບາງເທື່ອກໍຫຍຸ້ງຍາກ, ມືດມົນ ເບິ່ງສິ່ງຂອງທີ່ພວກເຮົາຈະຕົກລົງເອົາໃຫ້ຄົນອື່ນໄປກໍຍາກທີ່ຈະຕັດສິນໃຈ.
- ການດຳເນີນຊີວິດທີ່ປາຖນາໃຫ້ພຣະເຈົ້າເອົາຄວາມໝົດຫວັງອອກໄປຈາກເຂົາເຈົ້າແລ້ວເອົາຊີວິດທີ່ມີຄວາມໝາຍ ຄວາມຫວັງໃໝ່ມາສູ່ການດຳເນີນຊີວິດຂອງເຂົາເຈົ້າ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**